ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ພາກວິຊາຄູ ພາສາອັງກິດ-ໄອຊີທີ ເລກທີ 027/ອກ.ອທ

ນະຄອນຫຼວງວຽງຈັນ, ວັນທີ 21 ພຶດສະພາ 2025

# ບົດສະຫຼຸບປະຈໍາເດືອນ 5/2025 ແລະ ແຜນວຽກຈຸດສຸມເດືອນ 6/2025

**ຮຽນ:** ທ່ານ ຜູ້ອໍານວຍການວິທະຍາໄລຄູ ດົງຄໍາຊ້າງ

**ເລື່ອງ:** ບົດສະຫຼຸບປະຈໍາເດືອນ 5/2025 ແລະ ແຜນວຽກຈຸດສຸມປະຈໍາເດືອນ 6/2025 ຂອງພາກວິຊາຄູ ພາສາອັງກິດ-ໄອຊີທີ

ພາກວິຊາຄູ ພາສາອັງກິດ-ໄອຊີທີ ໄດ້ສັງລວມແຜນການເຄື່ອນໄຫວປະຈໍາເດືອນ 5/2025 ແລະ ແຜນຈຸດສຸມປະຈໍາເດືອນ 6/2025 ດັ່ງນີ້:

## I. ການເຄື່ອນໄຫວວຽກງານທີ່ພົ້ນເດັ່ນປະຈໍາເດືອນ 5/2025

### ກ. ວຽກງານແນວຄິດການເມືອງ, ການຈັດຕັ້ງ ແລະ ນະໂຍບາຍ

1. ພະນັກງານສ່ວນຫຼາຍມີແນວຄິດຫຼັກໝັ້ນດີ ແລະ ມີຄວາມອຸ່ນອ່ຽງທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ.
2. ມີຄວາມຮັບຜິດຊອບຕໍ່ໜ້າທີ່ມອບໝາຍໃຫ້ເປັນຢ່າງດີ.
3. ປະຕິບັດ ແລະ
ນັບຖືລະບຽບຂອງພັກ-ລັດໄດ້ເປັນຢ່າງດີເຊິ່ງມັນໄດ້ສະແດງອອກໃນການປະຕິບັດໂມງເວລາ ແຕ່ງກາຍ, ການໄປ-ການມາ ແລະ ການປະຕິບັດວຽກງານແຕ່ລະໜ້າວຽກ.

### ຂ. ວຽກງານວິຊາສະເພາະ

1. ຄູທຸກຄົນໄດ້ເອົາໃຈໃສ່ຂຶ້ນຫ້ອງສອນເປັນປົກກະຕິ.
2. ນໍາພານັກສຶກສາຄູອອກແຮງງານໃນຕອນແລງວັນພຸດ
3. ນໍາພານັກສຶກສາຄູພາຍໃນສາຍອອກແຮງງານໃນເຂດຮັບຜິດຊອບ
4. ຕິດຕາມ, ຊຸກຍູ້ ການຈັດການຮຽນການສອນຂອງຄູ ແລະ ນັກສຶກສາໃນພາກວິຊາ
5. ຈັດຕາຕະລາງຄູສອນໃນຖານຂໍ້ມູນ
6. ເກັບກໍາຂໍ້ມູນຊົ່ວໂມງສອນຂອງຄູພາຍໃນສາຍ
7. ສືບຕໍ່ເຮັດບົດວິໄຈໃນຫ້ອງຮຽນ
8. ອ່ານບົດວິໄຈນັກສຶກສາປີສຸດທ້າຍ
9. ຕິດຕາມຊ່ວຍເຫຼືອຄູອາສາສະໝັກທີ່ສອນໃນວິທະຍາໄລຄູ
10. ຈັດສັນຫ້ອງຄອມພິວເຕີ
11. ສໍາເລັດການຝຶກອົບຮົມການນໍາໃຊ້ ICT ເຂົ້າໃນການຮຽນການສອນ
12. ອອກຫົວບົດສອບເສັງໃຫ້ນັກຮຽນມັດທະຍົມສາທິດ ແລະ ນັກສຶກສາໃນວິທະຍາໄລຄູ ດົງຄໍາຊ້າງ
13. ຈັດຕາຕະລາງສອບທ້າຍພາກຮຽນ II
14. ຍາມຫ້ອງສອບເສັງຢູ່ມັດທະຍົມສາທິດ ດົງຄໍາຊ້າງ ແລະ ນັກສຶກສາພາຍ ໃນວິທະຍາໄລຄູ
15. ປ້ອງກັນບົດນັກສຶກສາປີສຸດທ້າຍ

16. ຮຽບຮຽງເອກະສານປະກອບການສອນ

17. ອັບເດດຂໍ້ມູນລົງເວັບໄຊຮ໌ຂອງພາກວິຊາ

❖ **ຂໍ້ຄົງຄ້າງ:** ຍັງມີບາງວຽກທີ່ຕ້ອງໄດ້ສືບຕໍ່ປະຕິບັດ ແລະ ປະຕິບັດແບບຕໍ່ເນື່ອງ

**II. ແຜນວຽກຈຸດສຸມປະຈຳເດືອນ 6/2025**

**ກ. ວຽກງານແນວຄິດການເມືອງ, ການຈັດຕັ້ງ ແລະ ນະໂຍບາຍ**

1. ສືບຕໍ່ແນວຄິດຫຼັກໝັ້ນ, ເຊື່ອໝັ້ນຕໍ່ການນຳພາຂອງຂອງພັກ
2. ມີຄວາມຮັບຜິດຊອບຕໍ່ໜ້າທີ່ມອບໝາຍໃຫ້ເປັນຢ່າງດີ.
3. ຫ້າວຫັນປະຕິບັດ ແລະ ນັບຖືລະບຽບຂອງພັກ-ລັດ

**ຂ. ວຽກງານວິຊາສະເພາະ**

1. ສືບຕໍ່ເຮັດບົດວິໄຈ
2. ຈັດສະພາບແວດລ້ອມເຂດທີ່ຮັບຜິດຊອບ
3. ຈັດສັນຫ້ອງຮຽນເພື່ອຕ້ອນຮັບນັກສຶກສາຊ່ວງພັກສິ້ນປີຮຽນ
4. ສັງລວມຄະແນນນັກສຶກສາປົກກະຕິ
5. ປ້ອນຄະແນນນັກສຶກສາເຂົ້າໃນຖານຂໍ້ມູນ
6. ສັງລວມປຶ້ມພັກສິ້ນປີຮຽນ
7. ຮັບຕ້ອນນັກສຶກສາພັກສິ້ນປີຮຽນ
8. ຈັດຄູສອນເພື່ອກະກຽມສອນຊ່ວງພັກສິ້ນປີຮຽນ
9. ຈັດຕາຕະລາງສອນພັກສິ້ນປີຮຽນ
10. ຮຽບຮຽງເອກະສານປະກອບການສອນຊ່ວງພັກສິ້ນປີຮຽນ

**III. ຂໍ້ສະເໜີ**

ດັ່ງນັ້ນ, ພາກວິຊາຄູ ພາສາອັງກິດ-ໄອຊີທີ ຈຶ່ງລາຍງານມາຍັງທ່ານເພື່ອຮັບຊາບຕາມທາງຄວນດ້ວຍ.

**ຫົວໜ້າພາກວິຊາສ້າງຄູ ພາສາອັງກິດ-ໄອຊີທີ** **ຜູ້ສັງລວມ**